# ທ່ານເປັນຜູ້ດູແລບໍ?

ຜູ້ດູແລແມ່ນໃຜຜູ້ໜຶ່ງທີ່ຊ່ວຍຄົນໃນ ຄອບຄົວຫຼືໝູ່ເພື່ອນໃນດ້ານ:

- ການອູ້ມຊູ ທາງຈິດໃຈ
- ພາໄປຊື້ ສິ່ງຂອງ
- ແຕ່ງອາຫານ ການກິນ
- ຈັດການເລື່ອງຢາ
- ດູແລສ່ວນຕົວ
- ຈ່າຍບິລ

# ນີ້ແມ່ນທ່ານບໍ ?

ມີການອູ້ມຊູໃຫ້ທ່ານຟຣີ ໂດຍພຽງແຕ່ທ່ານໂທຫາ ເທົ່ານັ້ນ. ຕິດຕໍ່ຫາ **Carers SA** ໂດຍຜ່ານ **Carer Gateway** ທີ່ **1800 422 737** ຫຼືເຂົ້າໄປ ທີ່ **carerssa.com.au**

Carers SA Australia

Carer Gateway

ໂຄງການລິເລີ່ມຂອງລັດຖະບານອອສເຕຣເລັຍ

ເຊື່ອມຕໍ່ຜູ້ດູແລ ໄປຫາບໍລິການອູ້ມຊູ

***Carer Gateway*** ແມ່ນໂຄງການລິເລີ່ມຂອງລັດຖະບານອອສເຕຣເລັຍທີ່ສະໜອງບໍລິການແລະການອຸ້ມຊູ ໃຫ້ແກ່ຜູ້ດູແລທີ່ບໍ່ໄດ້ຮັບຄ່າຈ້າງ ທົ່ວອອສເຕຣເລັຍ.

***Carers SA*** ແມ່ນເອເຢັນຫຼັກໃນຊາວທ໌ອອສເຕຣເລັຍທີ່ໃຫ້ບໍລິການເຫຼົ່ານີ້. ເປັນເວລາສາມສິບປີແລ້ວ, ທີ່ ***Carers SA*** ໄດ້ໃຫ້ການອຸ້ມຊູແກ່ຜູ້ດູແລທີ່ບໍ່ໄດ້ຮັບຄ່າຈ້າງທົ່ວ ຊາວທ໌ອອສເຕຣເລັຍ.

***Carers SA*** ຖືເປັນພັນທະໃນການເຮັດວຽກກັບບັນດາຜູ້ດູແລເພື່ອໃຫ້ການອຸ້ມຊູແລະບໍລິການທີ່ສຳຄັນ.

**ບໍລິການບາງຢ່າງທີ່ມີໄວ້ໃຫ້:**

- **ອຸ້ມຊູຜູ້ດູແລ** - ຊ່ວຍຜູ້ດູແລຕັດສິນໃຈວ່າເຂົາເຈົ້າຕ້ອງການຫຍັງ.
- **ການອຸ້ມຊູແບບເປັນຊຸດເໝາະກັບຄວາມຕ້ອງການ** - ເຮັດໃຫ້ຜູ້ດູແລເຂົ້າເຖິງອຸປະກອນແລະບໍລິການເພື່ອອຸ້ມຊູການເຮັດໜ້າທີ່ດູແລຂອງເຂົາເຈົ້າ.
- **ໃຫ້ຄຳປຶກສາດ້ານຈິດໃຈ** - ອຸ້ມຊູຜູ້ດູແລໂດຍໃຫ້ເຂົາເຈົ້າໄດ້ເວົ້າຢ່າງເປີດໃຈກ່ຽວກັບບັນຫາແລະຄວາມກັງວົນຕ່າງໆ.
- **ອຸ້ມຊູໝູ່ເພື່ອນດ້ວຍກັນ** - ເປັນບ່ອນທີ່ບັນດາຜູ້ດູແລສາມາດພົບປະກັບຄົນອື່ນທີ່ຢູ່ໃນສະພາບການດູແລທີ່ຄ້າຍຄືກັນ.
- **ດູແລແທນຍາມສຸກເສີນ** - ເພື່ອໃຫ້ໝັ້ນໃຈວ່າຜູ້ທີ່ຖືກດູແລຈະມີຄົນມາເບິ່ງແຍງ ຖ້າມີເຫດການຮີບດ່ວນຫຼືບໍ່ໄດ້ວາງແຜນໄວ້ກ່ອນເກີດຂຶ້ນ ແລະ ເຮັດໃຫ້ຜູ້ດູແລບໍ່ສາມາດຢູ່ທີ່ນັ້ນໄດ້.
- **ຄູຝຶກ** – ລະບຸເປົ້າໝາຍສ່ວນຕົວ ແລະ ຂຶ້ນແຜນເພື່ອໃຫ້ບັນລຸເປົ້າໝາຍ ເຫຼົ່ານີ້.
- **ໃຫ້ຄຳແນະນຳ** - ສະໜອງຂໍ້ມູນກ່ຽວກັບບໍລິການແລະການອຸ້ມຊູຕ່າງໆທີ່ມີ.

Carers SA Australia | Carer Gateway

ໂຄງການລິເລີ່ມຂອງລັດຖະບານອອສເຕຣເລັຍ

ເຊື່ອມຕໍ່ຜູ້ດູແລ ໄປຫາບໍລິການອຸ້ມຊູ

*Carers SA ຖືເປັນພັນທະຕໍ່ຄວາມປອດໄພ, ການປະກອບສ່ວນ ແລະ ສ້າງຄວາມເຂັ້ມແຂງໃຫ້ເດັກນ້ອຍແລະຄົນໜຸ່ມທຸກຄົນ.*

ທັນວາ 2022 LAO